ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ 04 /ກມສພ

ນະຄອນຫຼວງວຽງຈັນ, ວັນທີ 11 ເມສາ 2024

# ມະຕິ
# ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່

– ອີງຕາມແນວທາງປ່ຽນແປງໃໝ່ ຂອງພັກ, ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແລະ ບັນດາມະຕິ ຂອງຄະນະບໍລິຫານງານສູນກາງພັກ ໃນໄລຍະຜ່ານມາ.

– ເພື່ອຜັນຂະຫຍາຍທິດທາງການສືບຕໍ່ສ້າງເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ, ພັດທະນາເສດຖະກິດ ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ທີ່ກຳນົດອອກໃນມະຕິ ຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 05/ຄບສພ, ລົງວັນທີ 5 ກັນຍາ 2023 ໃຫ້ເປັນອັນລະອຽດ.

**ກົມການເມືອງສູນກາງພັກ ອອກມະຕິ:**

**1. ຄວາມຈຳເປັນ ໃນການອອກມະຕິ**

ພັກປະຊາຊົນປະຕິວັດລາວ ຢືນຢັນມາແຕ່ຕົ້ນແລ້ວວ່າ ດຳເນີນການປະຕິວັດຊາດ-ປະຊາທິປະໄຕ ເພື່ອຕໍ່ສູ້ຍາດເອົາເອກະລາດແຫ່ງຊາດ, ອິດສະຫຼະພາບ, ສິດ ປະຊາທິປະໄຕ ແລະ ຄວາມເປັນເຈົ້າ ຂອງປະເທດຊາດ ອັນແທ້ຈິງ ມາສູ່ກຳມື ຂອງປະຊາຊົນລາວບັນດາເຜົ່າ, ຈາກນັ້ນ ກໍ່ຍຶດໝັ້ນການເຊີດຊູຄວາມເປັນເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ໃຫ້ມີຄວາມໜັກແໜ້ນ ເປັນແນວທາງພັດທະນາ ອັນເປັນພື້ນຖານ ຂອງພັກເຮົາ (ນັບທັງການພັດທະນາເສດຖະກິດ). ໃນໄລຍະສິບກວ່າປີຜ່ານມາ, ພັກເຮົາ ໄດ້ວາງແນວທາງການພັດທະນາ ທີ່ຢືນຢູ່ບົນພື້ນຖານການຂຸດຄົ້ນ, ນຳໃຊ້ກາລະໂອກາດ ແລະ ກຳລັງແຮງສັງລວມ ເພື່ອສ້າງບາດກ້າວບຸກທະລຸໃນການພັດທະນາ, ຮັບປະກັນໃຫ້ການເຕີບໂຕ ຂອງເສດຖະກິດ ດ້ວຍຈັງຫວະທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງ, ສ້າງໃຫ້ມີຖານການຜະລິດ ແລະ ການບໍລິການ ທີ່ໜັກແໜ້ນ, ເຂັ້ມແຂງ, ຮັບປະກັນການພັດທະນາແບບຍືນຍົງ ແລະ ເປັນເຈົ້າຕົນເອງ. ຜ່ານພຶດຕິກຳຕົວຈິງ ໃນການກໍ່ສ້າງ, ພັດທະນາ ແລະ ຍົກລະດັບພື້ນຖານເສດຖະກິດແຫ່ງຊາດ ໄປຕາມທິດດັ່ງກ່າວ, ເຫັນວ່າຄວາມເປັນເຈົ້າຕົນເອງດ້ານເສດຖະກິດ ເມື່ອທຽບກັບເງື່ອນໄຂ, ຈຸດພິເສດ, ຄວາມສາມາດ ແລະ ທ່າແຮງບົ່ມຊ້ອນທີ່ມີຢູ່ ຂອງປະເທດເຮົາ ແມ່ນບໍ່ທັນຢູ່ໃນທ່ວງທ່າທີ່ຕັ້ງໜ້າ ແລະ ໜັກແໜ້ນເທື່ອ, ຍັງເພິ່ງພາ, ເອື່ອຍອີງໃສ່ການກູ້ຢືມ, ການຊ່ວຍເຫຼືອລ້າ, ອາໄສການຂຸດຄົ້ນຊັບພະຍາກອນທຳມະຊາດ ທີ່ສົ່ງອອກວັດຖຸດິບເປັນຕົ້ນຕໍ, ຂາດການປຸງແຕ່ງ ແລະ ບໍ່ຖືກທິດຍືນຍົງ, ປະເທດເຮົາ ຍັງປະເຊີນໜ້າກັບການຂາດດຸນໃນຫຼາຍດ້ານ ເຊັ່ນ: ດ້ານການຄ້າ, ພະລັງງານ, ງົບປະມານ, ເງິນຕາ ແລະ ແຮງງານ, ນອກນັ້ນ ສັງຄົມ



สแกนด้วย CamScanner

ເຮົາ ຍັງນັບມື້ນັບກາຍເປັນສັງຄົມບໍລິໂພກ, ຄົນໃນຊາດ ມີຄ່ານິຍົມຊົມໃຊ້ສິນຄ້າຈາກຕ່າງປະເທດເປັນຕົ້ນຕໍ ແລະ ອື່ນໆ...ເຮັດໃຫ້ຄວາມສາມາດຮັບມືກັບບັນຫາຕ່າງໆທີ່ເກີດຂຶ້ນ ຢູ່ພາຍໃນ ແລະ ຜົນສະທ້ອນຈາກສະພາບແວດລ້ອມພາຍນອກ ຍັງຈຳກັດຫຼາຍດ້ານ, ກໍ່ໃຫ້ເກີດມີຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ເງິນຕາ ທີ່ສະສົມຢ່າງຕໍ່ເນື່ອງ ມາຮອດປັດຈຸບັນ ເຊັ່ນ: ບັນຫາໜີ້ສິນ, ເງິນເຟີ້, ອັດຕາແລກປ່ຽນເງິນຕາຕ່າງປະເທດພັນຜວນ, ລາຄາສິນຄ້າ ແລະ ຄ່າຄອງຊີບ ຖີບຕົວສູງຂຶ້ນ ກະທົບຕໍ່ການພັດທະນາ ກໍ່ຄືສ້າງຄວາມຫຍຸ້ງຍາກ, ຝືດເຄືອງ ຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ອື່ນໆ. ສາເຫດ ຫຼື ປັດໄຈຕົ້ນຕໍທີ່ເຮັດໃຫ້ເກີດມີສະພາບດັ່ງກ່າວ ແມ່ນຍ້ອນການຄຸ້ມຄອງມະຫາພາກ ຂອງລັດ ຍັງບໍ່ທັນເຂັ້ມງວດ, ເຂັ້ມແຂງ, ຍັງມີການລະເມີດວິໄນແຜນການ-ການເງິນ ທີ່ຮ້າຍແຮງ, ປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ຍັງບໍ່ທັນສູງ, ຂາດຈຸດສຸມໃນການພັດທະນາ, ການສ້າງຖານການຜະລິດ ແລະ ການບໍລິການ ທີ່ເປັນຕົວຂັບເຄື່ອນເສດຖະກິດ ຍັງຊັກຊ້າ, ບໍ່ທ່ວງທັນກັບກາລະໂອກາດທີ່ມີ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍໄດ້ຢ່າງເປັນເຈົ້າການ.

ບົນສະພາບຄວາມເປັນຈິງດັ່ງກ່າວນັ້ນ, ພວກເຮົາ ມີຄວາມຈຳເປັນຢ່າງພາວະວິໄສ ເພື່ອຢືນຢັນຄືນຄວາມຖືກຕ້ອງ ຂອງແນວທາງ, ແຜນນະໂຍບາຍ ທີ່ໄດ້ວາງອອກ, ພ້ອມກັນນັ້ນ ກໍ່ກວດກາ, ຕີລາຄາ ແລະ ປັບປຸງບາງນະໂຍບາຍ, ຍົກລະດັບຄວາມສາມາດ ດ້ານການບໍລິຫານຈັດການ, ພັດທະນາເສດຖະກິດ ຕາມທິດສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ເຊິ່ງຈະເປັນເງື່ອນໄຂພື້ນຖານຮັບປະກັນການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທັງໃນໄລຍະສັ້ນ ແລະ ໄລຍະຍາວ ກໍ່ຄືການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາ ໃຫ້ນັບມື້ນັບເປັນຮູບປະທຳຍິ່ງຂຶ້ນ.

## 2. ແນວຄິດຊີ້ນຳ ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ

1). ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ແມ່ນພາກສ່ວນສຳຄັນ ຂອງຄວາມເປັນເອກະລາດ, ອຳນາດອະທິປະໄຕ ຂອງຊາດ ເຊິ່ງເນື້ອແທ້ແມ່ນການຍົກສູງສະຕິຊາດ, ເສີມຂະຫຍາຍ ສະຕິປັນຍາ, ກຳລັງແຮງ ແລະ ຄວາມສາມາດແຂ່ງຂັນ ຂອງຄົນໃນຊາດ ເພື່ອຂຸດຄົ້ນທ່າແຮງບົ່ມຊ້ອນດ້ານຊັບພະຍາກອນມະນຸດ, ຊັບພະຍາກອນທຳມະຊາດ, ທີ່ຕັ້ງພູມສັນຖານ, ວັດທະນະທຳ-ສັງຄົມ ຢ່າງມີການວາງແຜນ, ມີຍຸດທະສາດ ແລະ ຄຳນຶງເຖິງປະສິດທິພາບ, ປະສິດທິຜົນ ແລະ ຄວາມຄຸ້ມຄ່າ ຂອງການນຳໃຊ້ຄວາມສາມາດບົ່ມຊ້ອນ ຂອງຊັບພະຍາກອນທີ່ມີ ເພື່ອຕອບສະໜອງ ໃຫ້ແກ່ການປົກປັກຮັກສາປະເທດຊາດ ແລະ ການພັດທະນາທີ່ຍືນຍົງ, ສ້າງຄວາມຢູ່ດີກິນດີ ໃຫ້ປະຊາຊົນພາຍໃນຊາດ, ເຮັດໃຫ້ປະເທດຊາດ ມີສະຖຽນລະພາບ ທາງດ້ານການເມືອງ ແລະ ຄວາມໝັ້ນຄົງຢ່າງໜັກແໜ້ນ, ສັງຄົມ ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

2). ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ເລີ່ມຈາກຕ່ຳຫາສູງ, ຈາກນ້ອຍຫາໃຫຍ່ ແຕ່ຕ້ອງບົນພື້ນຖານການບຸກບືນສູ້ຊົນສູງສຸດ ແລະ ຕ້ອງໃຊ້ເວລາອັນເໝາະສົມ ດ້ວຍຈິດໃຈຄ້ຽງຮ້ອນ, ບໍ່ອະນຸຍາດໃຫ້ແກ່ຍາວ ໂດຍບໍ່ມີບາດກ້າວເດີນທີ່ຈະແຈ້ງ ແລະ ປ່ອຍປະຕາມ



สแกนด้วย CamScanner

ເປັນຕາມເກີດໄດ້ອີກ. ດັ່ງນັ້ນ ກ່ອນອື່ນໝົດຕ້ອງບຸກທະລຸດ້ານຈິນຕະນາການ, ສ້າງຄວາມຮັບຮູ້, ເຂົ້າໃຈ ຂອງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ ຕໍ່ການສ້າງຄວາມເປັນເຈົ້າດ້ານຄວາມຮັບຮູ້ ເພື່ອຂຸດຄົ້ນນຳໃຊ້ໃນສິ່ງທີ່ມີຢູ່ ຂອງປະເທດຊາດ ແລະ ສັງຄົມລາວ, ໃນສິ່ງທີ່ເຮົາສາມາດເຮັດໄດ້, ຮູ້ອີງໃສ່ທ່າແຮງບົ່ມຊ້ອນ ຂອງປະເທດ, ຮູ້ວາງແຜນ ໃນການຂຸດຄົ້ນ, ຄຸ້ມຄອງ, ນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ອອກມາເປັນທຶນຮອນຢ່າງມີປະສິດທິຜົນ, ສ້າງໃຫ້ຄົນລາວເປັນເຈົ້າຫຼາຍຂຶ້ນ ໃນການຮູ້ຫາເງິນຢ່າງເປັນລະບົບ, ຮູ້ສະສົມ ແລະ ນຳໃຊ້ທຶນຢ່າງປະຢັດ, ຮູ້ຕໍ່ຍອດ ແລະ ສ້າງມູນຄ່າເພີ່ມຂຶ້ນໃໝ່ ຢ່າງບໍ່ຢຸດຢັ້ງ. ອີກດ້ານໜຶ່ງ ຕ້ອງໃຫ້ຄົນລາວ ຮູ້ຊອກຄົ້ນຫາລາຍຮັບ ແລະ ຮູ້ສະສົມ, ປະຢັດ ທັງຮູ້ໃຊ້ຈ່າຍ ຢ່າງຄຸ້ມຄ່າ ແລະ ເກີດດອກອອກຜົນ; ຮູ້ຈັກຂຸດຄົ້ນ-ປົກປ້ອງ ຕະຫຼາດພາຍໃນ ແລະ ກ້າວເຂົ້າເຖິງ-ຍາດແຍ່ງສ່ວນແບ່ງຈາກຕະຫຼາດສາກົນ, ຮູ້ຈັກເຂົ້າເຖິງເຕັກໂນໂລຊີໃໝ່ ທີ່ທັນສະໄໝ ຂອງຍຸກສະໄໝ ແລະ ນຳໃຊ້ສິ່ງທີ່ໂລກມີ ແຕ່ເຮົາຍັງຂາດໃຫ້ໄດ້ຢ່າງສົມສ່ວນ ແລະ ມີການເລືອກເຟັ້ນ...; ເດັດດ່ຽວທັນເອົາເສດຖະກິດ ຂອງປະເທດເຮົາອອກສູ່ໂລກ, ນຳໃຊ້ຊັບພະຍາກອນທີ່ມີຢູ່ ໃຫ້ຄຸ້ມຄ່າ, ທັງພັດທະນາ, ທັງຊອກເອົາຄວາມຮູ້ ແລະ ໂອກາດໃໝ່ໆຂອງໂລກ ມານຳໃຊ້, ຍາດແຍ່ງທຶນຮອນ, ເຕັກໂນໂລຊີຈາກພາຍນອກ ກະທົບໃສ່ໃຫ້ອອກເປັນຜະລິດຕະພັນ, ສ້າງຍີ່ຫໍ້ສິນຄ້າ ທີ່ມີຄຸນນະພາບອອກສູ່ຕະຫຼາດໂລກໃຫ້ຫຼາຍຂຶ້ນ ແລະ ເປັນເຈົ້າການຄິດໄລ່-ໄຕ່ຕອງ ການນຳເອົາຜະລິດຕະພັນຈາກພາຍນອກ ມາຊົມໃຊ້ຢ່າງມີຈຸດສຸມ ແລະ ມີການເລືອກເຟັ້ນ.

3). ຢາກສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນເງື່ອນໄຂເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໄດ້ດີນັ້ນ, ນອກຈາກ ການເປັນເຈົ້າການພັດທະນາຊັບພະຍາກອນມະນຸດແລ້ວຍັງຕ້ອງມີການພັດທະນາພື້ນຖານການຜະລິດ, ການບໍລິການ, ສ້າງໃຫ້ມີຜະລິດຕະພັນທີ່ຫຼາກຫຼາຍ, ພັດທະນາລະບົບ ການເງິນ-ເງິນຕາ ໃຫ້ເຂັ້ມແຂງ ແລະ ເປັນເຈົ້າການເຊື່ອມໂຍງເຂົ້າກັບສາກົນ. ສຸມໃສ່ສ້າງພື້ນຖານການຜະລິດ ໃຫ້ໜັກແໜ້ນ, ເຂັ້ມແຂງ, ມີສິນຄ້າອຸປະໂພກ-ບໍລິໂພກ ພຽງພໍຕອບສະໜອງພື້ນຖານການດຳລົງຊີວິດ ຂອງສັງຄົມລາວ ໂດຍບໍ່ເພິ່ງພາຈາກພາຍນອກດ້ານດຽວ ກ້າວສູ່ການຜະລິດ ເພື່ອສົ່ງອອກ ແລະ ເກາະກ່າຍເປັນຕ່ອງໂສ້ໃນລະບົບການຜະລິດ ຂອງພາກພື້ນ ແລະ ສາກົນ, ສ້າງມູນຄ່າເພີ່ມໃຫ້ແກ່ການສົ່ງອອກສິນຄ້າ, ປຸງແຕ່ງຊັບພະຍາກອນ ທີ່ເປັນທ່າແຮງຂອງປະເທດ ໂດຍນຳໃຊ້ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ. ປັບປຸງລະບົບການເງິນ-ເງິນຕາ ໃຫ້ເຂັ້ມແຂງ, ຖືເປັນໝາກຫົວໃຈ ຫຼື ເສັ້ນເລືອດໃຫຍ່ ຂອງລະບົບເສດຖະກິດ ຂອງປະເທດ; ບົນພື້ນຖານນັ້ນ ຕ້ອງດຳເນີນທຸກມາດຕະການ ເພື່ອໃຫ້ມີລະບົບການເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້, ສ້າງແຫຼ່ງລາຍຮັບໃໝ່ ໃຫ້ຫຼາຍ ແລະ ໜັກແໜ້ນ, ຂຸດຄົ້ນແຫຼ່ງລາຍຮັບ ຈາກບ່ອນທີ່ມີຄວາມສາມາດຂຸດຄົ້ນໄດ້ ແລະ ເກັບໄດ້ ຕາມກົດໝາຍ ແລະ ລະບຽບການຢ່າງຍືດຍຸ່ນ, ທັງມີການປັບປຸງ ແລະ ພັດທະນາ ລະບົບ, ກົນໄກ ຢ່າງເປັນປະຈຳ ຕາມຫຼັກວິທະຍາສາດທີ່ປ່ຽນແປງໄດ້ ຕາມສະພາບການຕົວຈິງ ໃນແຕ່ລະໄລຍະ; ຕ້ອງຮູ້ວາງແຜນໃຊ້ຈ່າຍງົບປະມານຢ່າງເຄັ່ງຄັດ, ມີປະສິດທິຜົນ, ເກີດດອກອອກຜົນ ໃນການພັດທະນາຫຼາຍກວ່າເກົ່າ ແລະ ສ້າງສິ່ງຕອບແທນທີ່ຄຸ້ມຄ່າກວ່າເກົ່າ.

4). ຕ້ອງຕັ້ງໜ້າຍົກສູງຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເສີມຂະຫຍາຍຄວາມບາກບັ່ນສູ້ຊົນສູງສຸດຂອງຕົນເອງ ເປັນສິ່ງຕັດ



สแกนด้วย CamScanner

ສິນຕົ້ນຕໍ ໃນການຮັບປະກັນຄວາມເປັນເອກະລາດ, ເປັນເຈົ້າຕົນເອງ ໃຫ້ສະແດງອອກຢ່າງເປັນຮູບປະທຳ ທາງດ້ານເສດຖະກິດ, ການຮ່ວມມືດ້ານເສດຖະກິດກັບພາຍນອກ ແລະ ການເຊື່ອມໂຍງສາກົນ, ທັງເປັນການສ້າງເງື່ອນໄຂ, ຄວາມເຊື່ອໝັ້ນອັນໜັກແໜ້ນ ໃນການຍາດແຍ່ງ ແລະ ຮັບເອົາການສະໜັບສະໜູນ ຊ່ວຍເຫຼືອຈາກເພື່ອນມິດສາກົນ ໃຫ້ກາຍເປັນແຫຼ່ງທຶນຮອນ ເພື່ອພັດທະນາ ຫຼື ນຳໃຊ້ ຢ່າງມີປະສິດທິຜົນສູງສຸດ.

5). ເປົ້າໝາຍທີ່ຕ້ອງບັນລຸ ຂອງການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ແມ່ນເຮັດໃຫ້ຄົນລາວ, ສັງຄົມລາວ ຍົກລະດັບວິຖີຊີວິດ ແລະ ວິທີການທຳມາຫາກິນແບບໃໝ່, ສາມາດເສີມຂະຫຍາຍຫົວຄິດປະດິດສ້າງ, ຄວາມດຸໝັ່ນຂະຫຍັນພຽນ, ເປັນຜູ້ປະກອບການທີ່ເຂັ້ມແຂງ, ເປັນເຈົ້າຕົນເອງ; ຍົກສູງສະມັດຕະພາບການຜະລິດ, ຮູ້ສ້າງສາພັດທະນາ ດ້ວຍສະຕິປັນຍາ, ດ້ວຍຄວາມສາມາດທີ່ມີຢູ່ ແລະ ເດີນໜ້າດ້ວຍລຳແຂ້ງ ຂອງຕົນເອງ ຢ່າງເປັນເຈົ້າການ ແລະ ສາມາດແຂ່ງຂັນໄດ້; ມີຄ່ານິຍົມສິນຄ້າລາວ ໃຫ້ຫຼາຍຂຶ້ນ; ຮູ້ນຳໃຊ້ຊັບພະຍາກອນທີ່ພວກເຮົາມີຢູ່ໃຫ້ເປັນທຶນຮອນ, ແຕ່ຊັບພະຍາກອນ ຂອງຊາດ ຕ້ອງໄດ້ຮັບການປົກປັກຮັກສາ ແລະ ສາມາດນຳໃຊ້ໄດ້ຢ່າງຍືນຍົງ ແລະ ຍາວນານ, ເຮັດໃຫ້ປະຊາຊົນລາວ ໄດ້ຮັບຜົນປະໂຫຍດ ຈາກການພັດທະນາຢ່າງຍຸຕິທຳ, ສ້າງຄວາມຮັ່ງມີທົ່ວເຖິງ ແລະ ມີຄວາມຍືນຍົງໄປຕາມໆກັນ.

**3. ເພີ່ມທະວີການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດ, ການບໍລິການ, ລະບົບການເງິນ-ເງິນຕາ ແລະ ການຄຸ້ມຄອງບໍລິຫານລັດ ເພື່ອເປັນພື້ນຖານໃຫ້ແກ່ການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ຢ່າງມີບາດກ້າວເດີນທີ່ໜັກແໜ້ນ**

3.1. ທິດທາງລວມ

1). ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄປພ້ອມກັບການປະສານຢ່າງກົມກຽວ ລະຫວ່າງ ການຍູ້ແຮງພາກການຜະລິດ, ການບໍລິການ ເພື່ອຕອບສະໜອງຄວາມຕ້ອງການຊົມໃຊ້ພາຍໃນ ແລະ ສ້າງຄວາມເຂັ້ມແຂງ ຂອງຖານລາຍຮັບຢູ່ພາຍໃນ ກັບການເພີ່ມທະວີປະສິດທິພາບ ໃນການຄຸ້ມຄອງລາຍຮັບ ແລະ ການດຳເນີນມາດຕະການປະຢັດຢ່າງຈິງຈັງ ໂດຍການເຂົ້າຮ່ວມ ແລະ ເປັນເຈົ້າການ ຂອງທຸກພາກສ່ວນໃນສັງຄົມ. ທົບທວນຄືນຍຸດທະສາດ ກໍ່ຄືການພັດທະນາໂຄງປະກອບເສດຖະກິດເຂດແຄວ້ນ ເພື່ອກະຈາຍຄວາມໄດ້ປຽບດ້ານທີ່ຕັ້ງ, ທ່າແຮງ ຂອງແຕ່ລະທ້ອງຖິ່ນ ເປັນກຳລັງຂັບເຄື່ອນໃຫ້ແກ່ການພັດທະນາປະເທດຊາດ. ຕ້ອງສືບຕໍ່ຍູ້ແຮງການຄ້າຢູ່ປະເທດເຮົາ ເປັນຕ່ອງໂສ້ຕົ້ນຕໍ ຂອງລະບົບເສດຖະກິດ, ກະຕຸ້ນການເຕີບໂຕ ທາງດ້ານເສດຖະກິດ ໃຫ້ແຂງແຮງ ຕິດພັນກັບການພັດທະນາອຸດສາຫະກຳປຸງແຕ່ງ ແຕ່ເນັ້ນໄປສູ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃຫ້ກາຍເປັນສາຍພານ ຂອງການຜະລິດທີ່ໝຽວແໜ້ນ ແນໃສ່ເຮັດໃຫ້ການພັດທະນາເສດຖະກິດແຫ່ງຊາດ ມີກຳລັງແຮງທີ່ນັບມື້ສ້າງໄດ້ໂຄງປະກອບຂະແໜງເສດຖະກິດທີ່ເຂັ້ມແຂງ ຈາກສູນກາງ ໄປສູ່ເສດຖະກິດເຂດແຄວ້ນ ໄດ້ຢ່າງສະໝໍ່າສະເໝີ, ທັງເປີດກວ້າງໄດ້ການຜະລິດສິນຄ້າ, ເຮັດໃຫ້ເປັນແມ່ແຮງຂອງການສ້າງຖານລາຍຮັບນັບມື້ນັບຫຼາຍຂຶ້ນ ແລະ ໄປຕາມທິດສັງຄົມນິຍົມ.

2). ປັບປຸງໂຄງສ້າງດ້ານງົບປະມານແຫ່ງລັດ ແລະ ຄຸ້ມຄອງໜີ້ສາທາລະນະ, ເພີ່ມທະວີການສະກັດກັ້ນ ບໍ່ໃຫ້ເກີດມີໜີ້ສິນເກີນການຄວບຄຸມ ແລະ ເປັນເຈົ້າການດຸ່ນດ່ຽງໜີ້ສິນຢ່າງມີ



สแกนด้วย CamScanner

ວິທະຍາສາດ, ຖືກຕາມຫຼັກເສດຖະສາດ ເພື່ອແນໃສ່ຮັບປະກັນໃຫ້ພື້ນຖານລະບົບການເງິນແຫ່ງຊາດ ມີຄວາມໝັ້ນຄົງ, ຍືນຍົງ, ຮັກສາສະຖຽນລະພາບເສດຖະກິດມະຫາພາກ; ສຸມໃສ່ສ້າງໃຫ້ໄດ້ຄວາມເປັນເຈົ້າດ້ານການເງິນ ໂດຍສະເພາະການເກັບລາຍຮັບ, ຄຸ້ມຄອງລາຍຈ່າຍ, ການສະສົມໃຫ້ຄັງເງິນ ມີຄວາມເຕີບໃຫຍ່, ເຂັ້ມແຂງ, ສ້າງພື້ນຖານເຮັດໃຫ້ງົບປະມານແຫ່ງລັດເຕີບໃຫຍ່ຂະຫຍາຍຕົວ ແລະ ເຂັ້ມແຂງ, ສາມາດສ້າງມູນຄ່າເພີ່ມ ເພື່ອຕໍ່ຍອດທຶນຮອນ ໃຫ້ອອກສູ່ການພັດທະນາ ທີ່ມີປະສິດທິຜົນ. ເພີ່ມທະວີການລະດົມ, ຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ແຫຼ່ງທຶນຢ່າງມີປະສິດທິຜົນ, ຊຸກຍູ້ການພັດທະນາເສດຖະກິດ ແລະ ແກ້ໄຂບັນຫາສັງຄົມ, ການພັດທະນາຄົນ, ການປະຕິບັດນະໂຍບາຍດ້ານສັງຄົມ, ເພີ່ມທະວີສະຫວັດດີການສັງຄົມ, ປົກປັກຮັກສາສິ່ງແວດລ້ອມ, ຮັບມືກັບໄພພິບັດ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ຢ່າງເປັນເຈົ້າການ.

3). ປັບປຸງກົນໄກການເຄື່ອນໄຫວ ຂອງທະນາຄານ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການຄຸ້ມຄອງເງິນຕາ, ວຽກງານສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ການບໍລິການ, ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ກຸ່ມຜະລິດ ແລະ ສະຫະກອນ. ສຸມໃສ່ສ້າງໃຫ້ໄດ້ຄວາມເປັນເຈົ້າ ດ້ານວຽກງານເງິນຕາແຫ່ງຊາດ ເຊິ່ງເປັນອົງປະກອບພື້ນຖານສຳຄັນ ຂອງຄວາມເປັນເຈົ້າທີ່ແທ້ຈິງ ໃນການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ຄື: ຍົກສູງການຖືຄອງເງິນກີບ, ຄຸ້ມຄອງການຖືຄອງ ແລະ ໃຊ້ຈ່າຍທີ່ຂາດການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຄັ່ງຄັດ, ຮັດກຸມເຂັ້ມງວດ, ກະຈາຍຄວາມສ່ຽງດ້ານການນຳໃຊ້ເງິນຕາຕ່າງປະເທດ ເພື່ອບໍ່ໃຫ້ສະກຸນເງິນໃດໜຶ່ງ ຜູກມັດ, ຜູກຂາດ; ເຮັດໃຫ້ລະບົບການເງິນ-ເງິນຕາ ຂອງປະເທດເຮົາ ກາຍເປັນການເງິນ ເອກະລາດ ເປັນເຈົ້າຕົນເອງ, ເຮັດໃຫ້ລະບົບທະນາຄານ ເປັນແຫຼ່ງສຳຄັນໃນການສະສົມທຶນ ໂດຍສ້າງຄວາມເຕີບໃຫຍ່ ຂອງຄັງສຳຮອງເງິນຕາຕ່າງປະເທດ ເພື່ອຄ້ຳຈູນລະບົບເສດຖະກິດ-ການເງິນ ຂອງປະເທດເຮົາ.

4). ສືບຕໍ່ຍຶດໝັ້ນ ແລະ ຖືການບຸກທະລຸໃນຂົງເຂດບໍລິຫານ-ຄຸ້ມຄອງ ແຜນການ, ການເງິນ, ເງິນຕາ ສູ່ຄວາມໂປ່ງໃສ ແລະ ກວດສອບໄດ້, ມີປະສິດທິພາບເປັນໜ້າທີ່ຮີບດ່ວນທີ່ຕ້ອງສຸມໃສ່ແກ້ໄຂ, ທັງເປັນບັນຫາຍາວນານ ທີ່ຕ້ອງດຳເນີນການບູລະນະ ຢ່າງເປັນປະຈຳ ແລະ ຕໍ່ເນື່ອງ. ຕ້ອງຫັນປ່ຽນໂຄງປະກອບການລົງທຶນ ຂອງລັດ, ເນັ້ນການລົງທຶນທີ່ມີປະສິດທິຜົນຕົວຈິງ, ປະຕິຮູບລັດວິສາຫະກິດຢ່າງຈິງຈັງ, ທັງຄົ້ນຄວ້າສ້າງຕັ້ງລັດວິສາຫະກິດ ໃນຂະແໜງການທີ່ເປັນປາຍແຫຼມ ແລະ ຂະແໜງບໍລິການສາທາລະນະ.

### 3.2. ເປົ້າໝາຍສູ້ຊົນ

ແຕ່ນີ້ຮອດປີ 2026 ຕ້ອງສຸມທຸກກຳລັງແຮງສັງລວມ ເພື່ອຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄລຍະທ້າຍສະໄໝ ໃຫ້ປະກົດຜົນເປັນຈິງດ້ວຍຄຸນນະພາບ ແລະ ປະສິດທິຜົນຕົວຈິງ ຕາມຈິດໃຈສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ, ພ້ອມທັງສ້າງທ່າວງທ່າໃໝ່ ໃຫ້ແກ່ການຈັດຕັ້ງປະຕິບັດ ທິດທາງ, ຄາດໝາຍໃຫຍ່ ຮອດປີ 2030 ທີ່ຈະຖືກກຳນົດອອກໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍ່ຄືການບັນລຸຄາດໝາຍໃຫຍ່ ໃນວິໄສທັດ ຮອດປີ 2030.



สแกนด้วย CamScanner

1). ສືບຕໍ່ຮັບປະກັນ ໃຫ້ປະເທດຊາດ ມີສະຖຽນລະພາບທາງດ້ານການເມືອງ ແລະ ມີຄວາມສະຫງົບປອດໄພທາງສັງຄົມ ຢ່າງໜັກແໜ້ນ; ການຂະຫຍາຍຕົວ ຂອງເສດຖະກິດ ມີຄວາມໝັ້ນທ່ຽງ, ໜັກແໜ້ນ ແລະ ມີຄວາມຍືນຍົງ, ເປັນປະເທດລາຍຮັບປານກາງສູງ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໂດຍພື້ນຖານ; ເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ໄດ້ຮັບການພັດທະນາ ຢ່າງເປັນລະບົບ; ບັນດາພາກສ່ວນເສດຖະກິດ ທີ່ເປັນກໍາລັງແຮງໃຫ້ແກ່ພື້ນຖານເສດຖະກິດແຫ່ງຊາດ ມີຄວາມໜັກແໜ້ນ, ມີລະບົບໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງ, ສ້າງໂຄງປະກອບເສດຖະກິດທີ່ຖືເອົາກະສິກໍາ ຕິດແໜ້ນກັບອຸດສາຫະກໍາ ແລະ ການບໍລິການ ແລະ ພັດທະນາໄປຕາມທິດເສດຖະກິດພູມປັນຍາ, ຫັນເປັນອຸດສາຫະກໍາ ແລະ ຫັນເປັນດີຈີຕອນ, ເຮັດໃຫ້ສັດສ່ວນໂຄງປະກອບດ້ານອຸດສາຫະກໍາ ຂອງ GDP ເພີ່ມຂຶ້ນໃນແຕ່ລະປີດ້ວຍຕົວເລກທີ່ແນ່ນອນ.

2). ສູ້ຊົນຂະຫຍາຍການຈັດເກັບລາຍຮັບງົບປະມານແຫ່ງລັດ ໃຫ້ໄດ້ 20% ຂອງ GDP, ແຜນລາຍຈ່າຍ ບໍ່ເກີນການເພີ່ມຂຶ້ນ ຂອງລາຍຮັບ ຫຼື ບໍ່ເກີນ 20% ຂອງ GDP ເພື່ອເຮັດໃຫ້ລາຍຮັບພາຍໃນ ກຸ້ມລາຍຈ່າຍພາຍໃນ ແລະ ມີສ່ວນສະສົມພຽງພໍເພື່ອຊໍາລະໜີ້ສິນສາທາລະນະ, ເປັນເຈົ້າຕົນເອງທາງດ້ານການເງິນ, ລະບົບການເງິນ-ເງິນຕາ ມີຄວາມທັນສະໄໝ, ມີປະສິດທິພາບ, ສະດວກຄ່ອງຕົວ ແລະ ເອື້ອອໍານວຍໃຫ້ແກ່ການບໍລິການດ້ານການເງິນ, ການລົງທຶນ ແລະ ການຜະລິດທຸລະກິດ. ຕ້ອງສູ້ຊົນເຮັດໃຫ້ງົບປະມານສົມດຸນ, ຫຼຸດຜ່ອນການກູ້ຢືມເງິນຈາກຕ່າງປະເທດ, ຫັນໂຄງສ້າງໜີ້ສາທາລະນະທີ່ມີດອກເບ້ຍສູງ ໄປສູ່ເງິນກູ້ຕົ້ນທຶນທີ່ມີດອກເບ້ຍຕໍ່າ ແລະ ຕ້ອງຮັບປະກັນຄວາມເຊື່ອໝັ້ນ ໃນການຊໍາລະສະສາງໜີ້ສິນຕ່າງປະເທດ, ເຮັດໃຫ້ດັດຊະນີຄວາມໜ້າເຊື່ອຖືດ້ານການເງິນດີຂຶ້ນ.

3). ສູ້ຊົນແກ້ໄຂບັນຫາທາງດ້ານເງິນຕາ ແລະ ການຄຸ້ມຄອງເງິນຕາ ໃຫ້ເຂົ້າສູ່ລະບົບ ແລະ ມີການຫັນປ່ຽນຈະແຈ້ງ, ຮັບປະກັນສະຖຽນລະພາບດ້ານເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນທ່ຽງ ແລະ ການຖືຄອງ, ນໍາໃຊ້ເງິນກີບ ໃຫ້ເພີ່ມຂຶ້ນຫຼາຍເທົ່າ. ສູ້ຊົນໃຫ້ອັດຕາເງິນເຟີ້ຫຼຸດລົງຢ່າງຕໍ່ເນື່ອງ ໃນລະດັບໜຶ່ງຕົວເລກ; ຄັງສໍາຮອງເງິນຕາຕ່າງປະເທດ ເພີ່ມຫຼາຍຂຶ້ນ; ຄຸ້ມຄອງການສົ່ງອອກ ຜ່ານລະບົບທະນາຄານ ໃຫ້ບັນລຸ 85%, ຮັບປະກັນດຸນຊໍາລະເງິນຕາຕ່າງປະເທດ ແລະ ການເຂົ້າເຖິງບໍລິການທາງດ້ານການເງິນ ຕໍ່ປະຊາກອນທັງໝົດ ບັນລຸ 80%.

3.3. ແຜນນະໂຍບາຍ

1). ປັບປຸງໂຄງສ້າງການຜະລິດ-ການບໍລິການ

ກວດກາ ແລະ ປະເມີນຄືນການກໍານົດຍຸດທະສາດພັດທະນາ ຂອງບັນດາຂະແໜງການຜະລິດ ແລະ ການບໍລິການ ດ້ວຍການສົມທົບແໜ້ນ ລະຫວ່າງ ການສົ່ງເສີມ, ພັດທະນາ ແລະ ຂະຫຍາຍທຸກທ່າແຮງບົ່ມຊ້ອນ ກັບການສ້າງຖານການຜະລິດ ແລະ ສິນຄ້າ ທີ່ເປັນປາຍແຫຼມ ແລະ ມີຄວາມຍືນຍົງ; ຖືເອົາກະສິກໍາ ເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກໍາ, ສຸມໃສ່ຍົກລະດັບຂົງເຂດກະສິກໍາໃຫ້ທັນສະໄໝ, ນໍາໃຊ້ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ທີ່ເປັນມິດກັບສິ່ງແວດລ້ອມ ເຂົ້າໃນການສົ່ງເສີມການຜະລິດກະສິກໍາ ໃຫ້ສອດຄ່ອງກັບສະພາບດິນຟ້າອາກາດຢູ່ແຕ່ລະບ່ອນ ແນໃສ່ສ້າງ ແລະ ຕອບສະໜອງແຫຼ່ງວັດຖຸດິບ ທີ່ມີຄຸນນະພາບ ແລະ ພຽງພໍຮັບໃຊ້ການປຸງແຕ່ງ ກໍ່ຄື ສ້າງໃຫ້ມີຜະລິດຕະພັນກະສິກໍາ ສົດ, ສະອາດ, ປອດສານ



สแกนด้วย CamScanner

ພິດ ເພື່ອສົ່ງອອກ, ຮັບໃຊ້ການທ່ອງທ່ຽວ ແລະ ການຊົມໃຊ້ພາຍໃນ, ທົດແທນການນຳເຂົ້າ; ລົງທຶນໃສ່ການກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງດ້ານກະສິກຳ-ປ່າໄມ້ ຢູ່ເຂດຊົນນະບົດ ໃຫ້ເຂັ້ມແຂງ. ສ້າງ ແລະ ຂະຫຍາຍພື້ນຖານອຸດສາຫະກຳ ຫຼື ໂຮງຈັກ-ໂຮງງານດ້ານອຸດສາຫະກຳທີ່ສຳຄັນຈຳນວນໜຶ່ງ ເປັນຕົ້ນ ໂຮງງານປຸງແຕ່ງແຮ່ທາດ, ເຄມີພັນ, ປຸ໋ຍຊີວະພາບ, ຫົວອາຫານລ້ຽງສັດ, ການຜະລິດວັດສະດຸກໍ່ສ້າງ, ເຄື່ອງອຸປະໂພກ-ບໍລິໂພກ... ສືບຕໍ່ປັບປຸງ, ພັດທະນາ ແລະ ຍົກລະດັບ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ເຂົ້າເຖິງແຫຼ່ງທ່ອງທ່ຽວ ຕິດພັນກັບການສ້າງຜະລິດຕະພັນຮັບໃຊ້ການທ່ອງທ່ຽວແບບອະນຸລັກ, ການມີສ່ວນຮ່ວມຂອງປະຊາຊົນຢູ່ທ້ອງຖິ່ນ. ປັບປຸງການບໍລິການໂລຈິສຕິກ, ຈຸດຄ່ຽນຖ່າຍ, ຄວາມສາມາດໃນການບໍລິການຂົນສົ່ງສິນຄ້າ, ໂດຍສານ ຜ່ານແລວເສດຖະກິດຕ່າງໆ ໂດຍສະເພາະແລວເສດຖະກິດ ລາວ-ຈີນ, ຕາເວັນອອກ-ຕາເວັນຕົກ, ເໜືອ-ໃຕ້ ກໍ່ຄືການເຊື່ອມຕໍ່ ແລະ ເຂົ້າເຖິງຈຸດບໍລິການ ຂອງແລວທາງລົດໄຟ ລາວ-ຈີນ ເພື່ອປະຕິບັດຍຸດທະສາດເຊື່ອມຈອດດ້ານເສດຖະກິດ ໃຫ້ແຂງແຮງ ແລະ ມີລັກສະນະບຸກທະລຸສູງ.

2). ປັບປຸງໂຄງສ້າງງົບປະມານແຫ່ງລັດ

- ສືບຕໍ່ສ້າງລາຍຮັບງົບປະມານ ໃຫ້ຫຼາຍ, ໃຫ້ໄວ ແລະ ຫຼຸດຜ່ອນລາຍຈ່າຍງົບປະມານ ເພື່ອຍົກສູງຄຸນນະພາບ ຂອງງົບປະມານແຫ່ງລັດ ໂດຍສຸມໃສ່ປັບປຸງໂຄງສ້າງດ້ານການເກັບລາຍຮັບ ແລະ ການໃຊ້ຈ່າຍງົບປະມານແຫ່ງລັດຄືນໃໝ່ ເພື່ອຫຼຸດຜ່ອນລາຍຈ່າຍປົກກະຕິທີ່ບໍ່ຈຳເປັນ, ເພີ່ມທະວີການຄຸ້ມຄອງໜີ້ສາທາລະນະ, ຮັບປະກັນຄວາມໝັ້ນຄົງ ແລະ ຄວາມຍືນຍົງ ຂອງລະບົບການເງິນແຫ່ງຊາດ. ຕ້ອງລວມສູນທຸກລາຍຮັບງົບປະມານ ແລະ ໃຫ້ຂະແໜງການເງິນ ເປັນຜູ້ຈັດເກັບ ແລະ ຈັດສັນລາຍຮັບ-ລາຍຈ່າຍ ໃຫ້ຂະແໜງການສູນກາງ ແລະ ທ້ອງຖິ່ນ ຕາມແຜນງົບປະມານ ທີ່ສະພາແຫ່ງຊາດ ຮັບຮອງ.

ປະຕິບັດຢ່າງເຂັ້ມງວດຫຼັກການງົບປະມານແຫ່ງລັດ, ຫຼຸດຜ່ອນການຂາດດຸນ, ພະຍາຍາມເຮັດໃຫ້ງົບປະມານສົມດຸນ ແລະ ກ້າວໄປສູ່ເກີນດຸນງົບປະມານ, ຈັດສັນໃຫ້ມີສ່ວນເຫຼືອເພື່ອການສ້າງຄັງສະສົມແຫ່ງລັດ ໃຫ້ເຕີບໃຫຍ່ເຂັ້ມແຂງ. ສະນັ້ນ, ໃນສະເພາະໜ້ານີ້ ຕ້ອງປະຕິບັດກ່ຽວກັບຫຼັກການເງິນກູ້ຢືມ ເພື່ອດຸ່ນດ່ຽງການຂາດດຸນງົບປະມານແຫ່ງລັດ, ນຳໃຊ້ສະເພາະເຂົ້າໃນການລົງທຶນພັດທະນາເທົ່ານັ້ນ, ບໍ່ນຳໃຊ້ເຂົ້າໃນລາຍຈ່າຍປົກກະຕິ; ປັບປຸງການດຸ່ນດ່ຽງງົບປະມານແຫ່ງລັດ, ເພີ່ມການສະສົມເທື່ອລະກ້າວ ເພື່ອການລົງທຶນພັດທະນາ ແລະ ຊຳລະໜີ້ສິນ.

ປະຕິບັດນະໂຍບາຍເກັບລາຍຮັບ ຕິດພັນກັບການປັບປຸງໂຄງສ້າງ ຂອງລາຍຮັບງົບປະມານແຫ່ງລັດ ຕາມທິດໃຫ້ກວມເອົາທຸກແຫຼ່ງລາຍຮັບ, ຂະຫຍາຍຖານລາຍຮັບ ໂດຍສະເພາະແຫຼ່ງລາຍຮັບໃໝ່ໃຫ້ສອດຄ່ອງກັບຫຼັກການ; ເພີ່ມສັດສ່ວນລາຍຮັບພາຍໃນປະເທດ, ຮັບປະກັນສັດສ່ວນທີ່ເໝາະສົມ ລະຫວ່າງ ອາກອນທາງອ້ອມ ແລະ ອາກອນທາງກົງ, ຕ້ອງຍຸດຕິການຍົກເວັ້ນພາສີ-ອາກອນ ນອກເໜືອກົດໝາຍກຳນົດ; ຊອກຄົ້ນອາກອນທີ່ເກັບຈາກຊັບສິນ, ຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ.

ປັບປຸງໂຄງສ້າງລາຍຈ່າຍງົບປະມານແຫ່ງລັດ ຕາມທິດເພີ່ມສັດສ່ວນລາຍຈ່າຍ ເພື່ອການລົງທຶນ, ຫຼຸດຜ່ອນສັດສ່ວນລາຍຈ່າຍປົກກະຕິ ຕິດພັນກັບການຫັນປ່ຽນໃໝ່ຢ່າງແຂງແຮງ



สแกนด้วย CamScanner

ໃນຂະແໜງວິຊາຊີບ ຂອງພາກລັດ ໃຫ້ໄປຕາມກົນໄກກຸ້ມຕົນເອງ ແລະ ປັບປຸງກົງຈັກ, ໂກຕາ ພະນັກງານ ຕາມທິດກະທັດຮັດ. ປະຕິຮູບລະບອບເງິນເດືອນ, ຄ່າຄອງຊີບ ແລະ ນະໂຍບາຍສະ ຫວັດດີການ ຕໍ່ພະນັກງານ, ລັດຖະກອນ, ພາລະກອນ, ກຳລັງປະກອບອາວຸດ, ລວມທັງຜູ້ອອກ ແຮງງານ ຢູ່ຕາມວິສາຫະກິດຕ່າງໆ ໃຫ້ສອດຄ່ອງ ເພື່ອຮັບປະກັນລະດັບຄ່າຄອງຊີບອັນຈຳ ເປັນ ຂອງຜູ້ເຮັດວຽກກິນເງິນເດືອນ ໃນສະພາບເງື່ອນໄຂໃໝ່.

- ປັບໂຄງສ້າງການລົງທຶນຄືນໃໝ່, ຍົກສູງປະສິດທິຜົນການລົງທຶນ ຂອງລັດ, ສຸມງົບ ປະມານເຂົ້າໃນບັນດາໂຄງການຈຸດສຸມ ເພື່ອແກ້ໄຂບັນຫາການພັດທະນາ ຂອງຊາດ, ເຂດ ແຄວ້ນ ແລະ ທ້ອງຖິ່ນ, ໃຫ້ບຸລິມະສິດການລົງທຶນພັດທະນາພື້ນຖານໂຄງລ່າງຄົມມະນາຄົມ, ການສຶກສາ, ສາທາລະນະສຸກ ສຳລັບເຂດຊົນນະບົດ, ພູດອຍຫ່າງໄກສອກຫຼີກ ເພື່ອຮັບປະກັນ ການເຊື່ອມຕໍ່ຢ່າງເປັນລະບົບ ລະຫວ່າງຊົນນະບົດ ກັບຕົວເມືອງ, ເຂດພູດອຍ ກັບເຂດທົ່ງ ພຽງ; ສ້າງເງື່ອນໄຂສະດວກ ເພື່ອດຶງດູດການລົງທຶນ ຂອງພາກເອກະຊົນ ແລະ ການລົງທຶນ ໂດຍກົງ ຈາກຕ່າງປະເທດ.

- ກະຊວງການເງິນ ເປັນເຈົ້າການຄຸ້ມຄອງ ບັນດາຫົວໜ່ວຍລັດວິສາຫະກິດ, ວິສາຫະ ກິດປະສົມ (ວິສາຫະກິດລັດລົງທຶນ ທີ່ລັດຖະບານມີຮຸ້ນ ແລະ ຮ່ວມທຶນກັບພາກສ່ວນອື່ນ ໃນແຕ່ ລະຂະແໜງການ), ການດຳເນີນທຸລະກິດ ຕ້ອງສອດຄ່ອງກັບກົດໝາຍ, ລະບຽບການກ່ຽວ ຂ້ອງ ແລະ ຮັບປະກັນໃນການຈັດຕັ້ງປະຕິບັດ 4 ຫຼັກການໃຫຍ່ ຄື:

(1) ປະຕິບັດຕາມແນວທາງ, ນະໂຍບາຍຂອງພັກ-ລັດ ທີ່ວາງອອກເປັນແຕ່ລະໄລຍະ;

(2) ຮັບປະກັນການມີສ່ວນຮ່ວມ ຂອງອົງການຈັດຕັ້ງມະຫາຊົນ;

(3) ທຸກຫົວໜ່ວຍວິສາຫະກິດ ຕ້ອງສາມາດ ຕິດຕາມ, ກວດກາ, ກວດສອບ ໄດ້ຕະຫຼອດ ໄລຍະ;

(4) ທຸກຫົວໜ່ວຍວິສາຫະກິດ ຕ້ອງໄດ້ຜ່ານການໄລ່ລຽງເສດຖະກິດ ປະຈຳປີ ເຖິງແມ່ນ ວ່າ ຈະມີກຳໄລ ຫຼື ຂາດທຶນກໍ່ຕາມ ເພື່ອເປັນການຢັ້ງຢືນປະສິດທິຜົນ, ປະເມີນຜົນ ຂອງການ ດຳເນີນທຸລະກິດ ແລະ ຄະນະຜູ້ບໍລິຫານ.

- ດຳເນີນການປະຕິຮູບລັດວິສາຫະກິດຄືນໃໝ່ ຢ່າງມີປະສິດທິຜົນ, ສົ່ງເສີມການຫັນ ເປັນຫຸ້ນສ່ວນ, ຂະຫຍາຍຫຸ້ນ ຂອງລັດ ໃນທຸກກິດຈະການ, ໂຄງການ, ຫົວໜ່ວຍທຸລະກິດ ທີ່ ເປັນແຫຼ່ງລາຍຮັບໃຫຍ່ລະດັບຊາດ ຫຼື ຍຸດທະສາດຂອງຊາດ. ຖອນທຶນຄືນໃນບັນດາໂຄງການ ລົງທຶນ ທີ່ບໍ່ມີປະສິດທິຜົນ, ຫຸ້ນຂອງລັດ ໃນບັນດາວິສາຫະກິດ ທີ່ລັດບໍ່ຈຳເປັນຕ້ອງຖືຄອງ ເພື່ອ ນຳໃຊ້ເຂົ້າໃນການລົງທຶນພັດທະນາ ແລະ ແກ້ໄຂບັນຫາເສດຖະກິດ-ສັງຄົມ ທີ່ຮີບດ່ວນ.

- ແກ້ໄຂຢ່າງເດັດຂາດຕໍ່ໜີ້ເສຍ ແລະ ບັນດາສະຖາບັນສິນເຊື່ອທີ່ອ່ອນແອ, ລະເມີດ ກົດໝາຍ; ຄົ້ນຄວ້າ, ໄລ່ລຽງຢ່າງຖືກຕ້ອງ, ຄິດໄລ່ຕົ້ນທຶນລາຄາ ຂອງການບໍລິການສາທາ ລະນະ ແລະ ມີນະໂຍບາຍສະໜັບສະໜູນທີ່ເໝາະສົມໃຫ້ແກ່ເປົ້າໝາຍຜູ້ທຸກຍາກ, ຜູ້ດ້ອຍໂອ ກາດໃນສັງຄົມ ເພື່ອດ້ານໜຶ່ງ ບໍ່ເປັນການແບກຫາບພາລະໜີ້ສິນ, ສ່ວນດ້ານໜຶ່ງອີກ ກໍ່ສາ ມາດປະຕິບັດບົດບາດບໍລິການສາທາລະນະ ຂອງລັດ ໄດ້ຢ່າງມີປະສິດທິພາບ.

- ເພີ່ມທະວີລະບຽບວິໄນ ແຜນການ-ການເງິນ, ຍົກສູງຄວາມສັກສິດ, ປະສິດທິຜົນ ໃນ ການຄຸ້ມຄອງຂອງລັດ ກ່ຽວກັບການເງິນ-ງົບປະມານ, ໜີ້ສາທາລະນະ ແລະ ຫົວໜ່ວຍທຸລະ



สแกนด้วย CamScanner

ກິດ ຂອງລັດ ຫຼື ລັດຫຸ້ນສ່ວນ; ປະຕິບັດຢ່າງມີປະສິດທິຜົນ ການແບ່ງຂັ້ນ, ແບ່ງສິດອຳນາດ ແລະ ຄວາມຮັບຜິດຊອບ ຂອງອົງການປົກຄອງທ້ອງຖິ່ນ; ສະກັດກັ້ນ ແລະ ແກ້ໄຂຢ່າງເຂັ້ມງວດ ການຫຼົບຫຼີກ ແລະ ຕິດໜີ້ ພາສີ-ອາກອນ ທີ່ເປັນການສູນເສຍລາຍຮັບ.

**3). ການຄຸ້ມຄອງ ແລະ ແກ້ໄຂໜີ້ສິນ**

- ເພີ່ມທະວີການຄຸ້ມຄອງ ແລະ ແກ້ໄຂໜີ້ສາທາລະນະ, ເຈລະຈາຂໍຍືດເວລາຊຳລະໜີ້ກັບເຈົ້າໜີ້ຕ່າງປະເທດ, ຍົກສູງປະສິດທິຜົນ ຂອງການນຳໃຊ້ເງິນກູ້ຢືມ; ການລະດົມ ແລະ ນຳໃຊ້ທຶນກູ້ຢືມຕ່າງປະເທດ ຕ້ອງຕິດພັນກັບຄວາມຕ້ອງການດ້ານປະສິດທິຜົນເສດຖະກິດ-ສັງຄົມ ໂດຍສະເພາະແມ່ນຂະແໜງສ້າງລາຍຮັບແຫ່ງຊາດ ແລະ ຄວາມສາມາດໃນການຈ່າຍໜີ້ສິນ.

- ປັບປຸງບັນດາລະບອບ, ກົນໄກ ໂດຍສະເພາະແມ່ນນະໂຍບາຍ, ເຄື່ອງມື, ກົງຈັກຄຸ້ມຄອງໜີ້ສາທາລະນະ ເພື່ອຮັບປະກັນການປະຕິບັດ ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ເພື່ອຄວບຄຸມຄວາມສ່ຽງຢ່າງຮອບດ້ານ, ຄຸ້ມຄອງ ແລະ ແກ້ໄຂໜີ້ສາທາລະນະ ຢ່າງມີປະສິດທິຜົນ; ຄົ້ນຄວ້າປັບປຸງຂອບເຂດເພດານໜີ້ສາທາລະນະ ໃຫ້ສອດຄ່ອງກັບການປະຕິບັດຕາມມາດຕະຖານສາກົນເທື່ອລະກ້າວ. ສືບຕໍ່ປັບໂຄງສ້າງໜີ້ພາກລັດຄືນໃໝ່ ຕາມທິດຂະຫຍາຍໄລຍະເວລາໃຊ້ໜີ້, ຫຼຸດຜ່ອນຄວາມກົດດັນໃນການຊຳລະໜີ້ໄລຍະສັ້ນ ແລະ ຫຼຸດຜ່ອນລາຍຈ່າຍຕົ້ນທຶນໃນການກູ້ຢືມ.

- ຄວບຄຸມຢ່າງເຂັ້ມງວດໜີ້ສາທາລະນະ, ເດັດຂາດບໍ່ໃຫ້ມີການຈ່າຍນອກກອບແຜນງົບປະມານທີ່ໄດ້ຮັບຮອງໃນແຕ່ລະປີ, ຮັບປະກັນການຮັບມືກັບບັນດາຄວາມສ່ຽງທີ່ອາດເກີດຂຶ້ນ; ຕິດຕາມ, ກວດກາ ຢ່າງໃກ້ຊິດການປ່ອຍເງິນກູ້ ແລະ ການນຳໃຊ້ທຶນ ຂອງບັນດາກອງທຶນ ຂອງລັດ, ລວມທັງການນຳໃຊ້ຄັງແຮສຳຮອງເງິນຕາຕ່າງປະເທດ ແລະ ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ. ຍົກສູງປະສິດທິຜົນການນຳໃຊ້ເງິນກູ້ຢືມ, ຮັບປະກັນການຊຳລະໜີ້ຢ່າງຄົບຖ້ວນ ແລະ ທັນການ. ຄຸ້ມຄອງ, ຕິດຕາມ, ກວດກາ, ກວດສອບ ບັນຊີຕໍ່ບັນດາກອງທຶນຂອງລັດ, ຈັດສັນຄືນບັນດາກອງທຶນທີ່ມີແຫຼ່ງລາຍຮັບ, ມີການຈ່າຍຊໍ້າຊ້ອນກັບງົບປະມານ ທີ່ເຫັນວ່າ ບໍ່ມີຄວາມສອດຄ່ອງກັນ.

- ຫັນປ່ຽນໂຄງສ້າງການກູ້ຢືມ ແລະ ໜີ້ສິນສາທາລະນະ ຈາກການກູ້ຢືມ ໃນເງື່ອນໄຂທາງດ້ານທຸລະກິດ ໄປສູ່ການກູ້ຢືມ ໃນເງື່ອນໄຂຜ່ອນຜັນຫຼາຍຂຶ້ນ. ບໍ່ຫັນປ່ຽນທຶນກູ້ຢືມ, ການຄໍ້າປະກັນ ຂອງລັດຖະບານ ເປັນທຶນເບີກຈ່າຍງົບປະມານບໍລິຫານຂອງລັດ; ເພີ່ມທະວີການຄຸ້ມຄອງລາຍຈ່າຍເງິນກູ້ ຕາມທິດທີ່ສອດຄ່ອງກ່ຽວກັບລະບຽບຂັ້ນຕອນ, ຄຸ້ມຄອງລວມສູນ ແລະ ປັບປຸງກົນໄກການຄຸ້ມຄອງ ແລະ ຄວບຄຸມບັນດາສັນຍາຈ່າຍ. ກີສຳຄັນວຽກງານກວດສອບ, ກວດກາ, ກວດກາບັນຊີ, ປະຕິບັດຫຼັກການເປີດເຜີຍ, ໂປ່ງໃສ, ຍົກສູງຄວາມຮັບຜິດຊອບ ໃນການອະທິບາຍຊີ້ແຈງ ກ່ຽວກັບງົບປະມານແຫ່ງລັດ, ການຄຸ້ມຄອງ ແລະ ແກ້ໄຂໜີ້ສາທາລະນະ.

- ສືບຕໍ່ປັບປຸງປ່ຽນແປງໃໝ່ວຽກງານຄຸ້ມຄອງພະນັກງານ ແລະ ບຳລຸງວິຊາສະເພາະໃຫ້ແກ່ກຸ່ມແຖວພະນັກງານທີ່ເຮັດວຽກການເງິນ ຢ່າງເປັນປະຈຳ, ຍົກສູງຄວາມສາມາດໃນການຄາດຄະເນ ແລະ ສ້າງແຜນການ ການເງິນ-ງົບປະມານແຫ່ງລັດ, ການຄຸ້ມຄອງ ແລະ ແກ້ໄຂໜີ້ສາທາລະນະ.



สแกนด้วย CamScanner

4). ກ່ຽວກັບເງິນຕາ

- ສຸມໃສ່ຮັກສາສະຖຽນລະພາບເງິນຕາ, ປັບປຸງຖານະການເງິນ ຂອງທະນາຄານແຫ່ງ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະແມ່ນຊັບສິນເປັນເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ (ຄໍາ), ປັບປຸງໂຄງສ້າງທາງດ້ານເງິນຕາ ໃນລະບົບເສດຖະກິດ, ຕີກອບການນໍາໃຊ້ເງິນຕາຕ່າງປະເທດແບບຊະຊາຍ ຢູ່ໃນປະເທດ, ສ້າງກົນໄກ ເພື່ອຍົກສູງຄຸນຄ່າເງິນກີບ; ພ້ອມນັ້ນ ກໍ່ນໍາໃຊ້ຫຼາຍສະກຸນເງິນຕາທີ່ເຂັ້ມແຂງ ເຂົ້າໃນການເຊື່ອມໂຍງທາງດ້ານການຄ້າ, ການລົງທຶນ ກັບສາກົນ, ຄຸ້ມຄອງເງິນຕາຕ່າງປະເທດໃຫ້ເປັນລະບົບຄົບຊຸດ, ເຮັດໃຫ້ລະບົບທະນາຄານ (ຕະຫຼາດເງິນຕາ) ແລະ ລະບົບຕະຫຼາດທຶນ ເປັນແຫຼ່ງສໍາຄັນໃນການສະສົມທຶນຮອນ-ການລົງທຶນ ແລະ ເປັນກົນໄກຈໍລະຈອນແຈກຢາຍແຫຼ່ງທຶນ ກໍ່ຄືການຊໍາລະສະສາງທີ່ສະດວກ, ວ່ອງໄວ ແລະ ຮັບປະກັນການສະໜອງທຶນໃຫ້ແກ່ການດໍາເນີນການຜະລິດ-ທຸລະກິດ ແລະ ການບໍລິການ ໂດຍສະເພາະແມ່ນເປົ້າໝາຍວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ.

- ກໍານົດນະໂຍບາຍເງິນຕາໃຫ້ສອດຄ່ອງ ແລະ ຄ່ອງຕົວກວ່າເກົ່າ, ເປັນຕົ້ນ ການຄຸ້ມຄອງບໍລິຫານອັດຕາດອກເບ້ຍອ້າງອີງ ໃຫ້ຄ່ອງຕົວຫຼາຍກວ່າເກົ່າ, ອັດຕາດອກເບ້ຍເງິນກູ້, ເງິນຝາກ, ໃນນີ້ ເພີ່ມອັດຕາດອກເບ້ຍເງິນຝາກເປັນເງິນກີບ ໃຫ້ມີຄວາມເໝາະສົມ, ການຄວບຄຸມປະລິມານເງິນ, ຄຸມເຂັ້ມການຊໍາລະສະສາງຜ່ານລະບົບທະນາຄານ; ປັບປຸງ, ຍົກລະດັບລະບົບ ການເງິນ-ການທະນາຄານ ຂອງ ສປປ ລາວ ໃຫ້ເທົ່າທຽມກັບສາກົນ ເທື່ອລະກ້າວ.

4. ການຈັດຕັ້ງປະຕິບັດ

1). ຄະນະພັກ ກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນ ເນື້ອໃນຈິດໃຈ ມະຕິສະບັບນີ້ ແລະ ຍົກສູງຄວາມເປັນເຈົ້າການ ພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ທັນການ, ຖືກຕ້ອງ ແລະ ມີຜົນສໍາເລັດ.

2). ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພີ່ມທະວີການນໍາພາສຶກສາອົບຮົມ, ສ້າງຄວາມເອກະພາບທາງດ້ານທັດສະນະ, ຄວາມຮັບຮູ້ ແລະ ການກະທໍາ ໃນທົ່ວພັກ, ທົ່ວລັດ, ກໍາລັງປະກອບອາວຸດ ແລະ ທົ່ວສັງຄົມ ໃນການປະຕິບັດ ພັນທະ, ໜ້າທີ່ ຂອງແຕ່ລະພາກສ່ວນ.

3). ຍົກສູງຄວາມຮັບຜິດຊອບ ຂອງບັນດາຄະນະພັກ:

① ມອບໃຫ້ຄະນະພັກ ສະພາແຫ່ງຊາດ, ລັດຖະບານ, ກະຊວງ, ອົງການ ແລະ ທ້ອງຖິ່ນ-ຮາກຖານ ຈັດຕັ້ງປະຕິບັດມາດຕະການດ້ານບໍລິຫານ:

- ປັບປຸງກົດໝາຍ, ນິຕິກໍາລຸ່ມກົດໝາຍ, ບຸກທະລຸດ້ານລະບອບ, ລະບຽບການ, ກົນໄກບໍລິຫານ-ຄຸ້ມຄອງລັດ ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ. ລຶບລ້າງການເກື້ອກູນທຸກຮູບແບບໃນກົງຈັກ ກໍ່ຄື ໃນລະບອບ, ລະບຽບການ ຂອງລັດ; ທົບທວນຄືນນະໂຍບາຍທີ່ດິນ, ການສະໜອງໄຟຟ້າ, ນະໂຍບາຍດ້ານແຮງງານ, ກົນໄກ, ສິດທິປະໂຫຍດ, ການປົກປ້ອງ ແລະ ສົ່ງເສີມການຜະລິດພາຍໃນ,... ໃຫ້ສອດຄ່ອງ ແລະ ສາມາດດຶງດູດການລົງທຶນ, ການພັດທະນາ. ພ້ອມກັບນັ້ນກໍ່ສືບຕໍ່ເສີມຂະຫຍາຍ ແລະ ດໍາເນີນນະໂຍບາຍພິເສດ ຫຼື ນະໂຍບາຍສະເພາະ ດ້ານການເງິນ,



สแกนด้วย CamScanner

ການລົງທຶນ, ການພັດທະນາ...ຢູ່ແຂວງທີ່ມີຄວາມຫຍຸ້ງຍາກ, ເຂດທີ່ພົ້ນການປະຕິວັດໃນເມື່ອກ່ອນ, ເຂດພູດອຍຫຼະກັນດານ ຢ່າງມີຈຸດສຸມ.

- ແກ້ໄຂຂອດຂັ້ນດ້ານການບໍລິຫານລັດ, ການປັບປຸງພາຍໃນ, ຕິຖອຍຜົນປະໂຫຍດ ຂອງບຸກຄົນ, ກຸ່ມກ້ອນ ທີ່ຂັດຂວາງການແກ້ໄຂບັນຫາ ຕິດພັນກັບການແກ້ໄຂຜົນຂອງການກວດສອບ ແລະ ຜົນຂອງການກວດກາ ຢ່າງເຂັ້ມງວດ.

- ຍົກສູງຄວາມສາມາດຄຸ້ມຄອງ-ບໍລິຫານລັດ ແລະ ການແກ້ໄຂບັນຫາ ຂອງຂະແໜງການ ແລະ ທ້ອງຖິ່ນຂັ້ນຕ່າງໆ; ກວດກາ, ຕີລາຄາ ຄວາມສາມາດ ຂອງພະນັກງານ ຢ່າງເປັນປະຈໍາ ໂດຍສະເພາະແມ່ນຜູ້ທີ່ເປັນຫົວໜ້າຢູ່ແຕ່ລະຂັ້ນ.

- ເອົາໃຈໃສ່ສື່ສານ, ໂຄສະນາປຸກລະດົມ ໃຫ້ປະຊາຊົນ ຮັບຮູ້ ແລະ ເຂົ້າໃຈ ຢ່າງເລິກເຊິ່ງກ່ຽວກັບການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ, ຄວາມເປັນເຈົ້າໃນການປະຕິບັດພັນທະ, ໜ້າທີ່ ຂອງພົນລະເມືອງລາວ ຢ່າງຄົບຖ້ວນ; ສະກັດກັ້ນ, ປ້ອງກັນ ການລະເມີດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ, ການຄ້າຂາຍເຖື່ອນ, ຫຼົບຫຼີກພາສີ-ອາກອນ, ການຟຸມເຟືອຍຕ່າງໆ.

② ມອບໃຫ້ຄະນະພັກ ຄະນະຈັດຕັ້ງສູນກາງພັກ, ກະຊວງພາຍໃນ, ກະຊວງການເງິນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ບັນດາກະຊວງເສດຖະກິດ ຈັດຕັ້ງປະຕິບັດມາດຕະການ ການຄຸ້ມຄອງມະຫາພາກ:

- ປັບປຸງກົນໄກ, ການແບ່ງສິດ, ການແບ່ງຂັ້ນຄຸ້ມຄອງ ດ້ານເສດຖະກິດ, ການເງິນລະຫວ່າງສູນກາງ ກັບທ້ອງຖິ່ນ, ຮາກຖານ ໃຫ້ເປັນລະບົບ ເພື່ອເສີມຂະຫຍາຍທ່າແຮງ, ຄວາມສາມາດ ຂອງແຕ່ລະພາກສ່ວນໃຫ້ສຸດຂີດ ແລະ ມີປະສິດທິຜົນ; ເສີມຂະຫຍາຍຄວາມຮັບຜິດຊອບ, ລັກສະນະເປັນເຈົ້າການ, ປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ເພື່ອຜົນປະໂຫຍດສ່ວນລວມ.

- ກວດກາຄືນ ແລະ ມີມາດຕະການເດັດຂາດ ຕໍ່ກັບການຍົກເວັ້ນພາສີ-ອາກອນ ທີ່ລັດເສຍຜົນປະໂຫຍດ ກໍ່ຄື ກັບພາກສ່ວນທີ່ບໍ່ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍ ແລະ ບໍ່ມີສັນຍາຍົກເວັ້ນພາສີ ກັບລັດຖະບານ ໂດຍສະເພາະ ແມ່ນໂຄງການ, ກິດຈະການ ຂອງຄົນຕ່າງປະເທດ.

- ປັບປຸງອົງການເກັບລາຍຮັບໃຫ້ທັນໄປສູ່ທັນສະໄໝ, ກະທັດຮັດ, ມີປະສິດທິຜົນຢ່າງຈິງຈັງ ເພື່ອຄຸ້ມຄອງພາສີ-ອາກອນ, ຄ່າທໍານຽມຢ່າງເອກະພາບ, ໂປ່ງໃສ, ເປັນມືອາຊີບ; ຍູ້ແຮງການນໍາໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອຫຼຸດຂອດຂັ້ນ ແລະ ຄ່າໃຊ້ຈ່າຍ ຂອງປະຊາຊົນ ແລະ ຜູ້ປະກອບການ.

- ສັບຊ້ອນ-ຫຼຸດຜ່ອນ ກົງຈັກ, ໂຄງສ້າງພະນັກງານ-ລັດຖະກອນ ຄືນໃໝ່, ຫຼຸດຜ່ອນຕໍາແໜ່ງງານ, ການຫັນໄປສູ່ກຸ້ມຕົນເອງດ້ານງົບປະມານ-ການເງິນ ຂອງບາງຂະແໜງການ ທີ່ມີຄວາມສາມາດຕື່ມ ຕິດພັນກັບການປະຕິຮູບລະບອບເງິນເດືອນ ແລະ ນະໂຍບາຍຕ່າງໆ.

③ ມອບໃຫ້ຄະນະພັກ ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ ເປັນໃຈກາງປະສານສົມທົບກັບຄະນະພັກ ກະຊວງ, ອົງການ ແລະ ທ້ອງຖິ່ນກ່ຽວຂ້ອງ ເອົາໃຈໃສ່:

- ປະຕິບັດນະໂຍບາຍປະຢັດ, ຕ້ານການຟຸມເຟືອຍງົບປະມານແຫ່ງລັດ ເພື່ອຮັບປະກັນແຫຼ່ງທຶນເພີ່ມຕື່ມ ໃຫ້ແກ່ທຶນລົງທຶນພັດທະນາພື້ນຖານໂຄງລ່າງເສດຖະກິດ ໄປຕາມທິດ



สแกนด้วย CamScanner

ຫຼຸດຜ່ອນລາຍຈ່າຍບໍລິຫານ ເພີ່ມການລົງທຶນໃສ່ການພັດທະນາທີ່ມີຜົນປະໂຫຍດດ້ານເສດຖະກິດ-ສັງຄົມ, ສຸມໃສ່ບັນດາໂຄງການທີ່ຊຸກຍູ້ການຈະເລີນເຕີບໂຕ ແລະ ຍືນຍົງ; ເດັດຂາດບໍ່ໃຫ້ນຳໃຊ້ທຶນກູ້ຢືມເຂົ້າໃນໂຄງການທີ່ມີປະສິດທິຜົນດ້ານເສດຖະກິດ-ສັງຄົມ ຕ່ຳ ຫຼື ບໍ່ຈະແຈ້ງ, ຮັບປະກັນຄວາມປອດໄພໜີ້ສາທາລະນະ.

- ຈັດສັນແຫຼ່ງງົບປະມານ ເພື່ອຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ, ເພີ່ມເຂົ້າໃສ່ຄັງສຳຮອງເງິນຕາຕ່າງປະເທດ ແລະ ຄັງແຮສະສົມແຫ່ງຊາດ ໃຫ້ຫຼາຍຂຶ້ນ.

- ເພີ່ມທະວີການກວດກາ ແລະ ຕິດຕາມການນຳໃຊ້ທຶນກູ້ຢືມ ເພື່ອນາປ່ອຍໃຫ້ກູ້ຢືມຕໍ່, ຈຳກັດທີ່ສຸດການຄ້ຳປະກັນ ຂອງລັດຖະບານ ສຳລັບເງິນກູ້ຢືມໃໝ່ ພ້ອມທັງກວດກາ ແລະ ແກ້ໄຂຄືນອັດຕາດອກເບ້ຍທີ່ມີການປ່ຽນແປງ ເຊິ່ງລັດແບກຫາບກັບເຈົ້າໜີ້ຜູ້ດຽວ; ກະຊວງການເງິນ ເປັນເຈົ້າການຄົ້ນຄວ້າກົນໄກ ການຊຳລະໜີ້ສິນ ໂຄງການລົງທຶນຂອງລັດ.

④ ມອບໃຫ້ຄະນະພັກ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງອຸດສາຫະກຳ-ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່:

- ຍູ້ແຮງການປະຕິບັດບັນດາໂຄງການ ທີ່ຊຸກຍູ້ການຈະເລີນເຕີບໂຕດ້ານເສດຖະກິດ ໂດຍຫັນຫຸ້ນຈຳນວນໜຶ່ງ ຂອງລັດ ເພື່ອຮ່ວມທຶນ ແລະ ບໍລິຫານທຶນຮ່ວມກັບນັກລົງທຶນຕ່າງປະເທດ ຫຼື ວິສາຫະກິດຕ່າງປະເທດ ເພື່ອເພີ່ມມູນຄ່າທຶນໃຫ້ສູງຂຶ້ນ ແລະ ຮັບປະກັນປະສິດທິຜົນ.

- ປັບປຸງການພັດທະນາ, ປະຕິຮູບເສດຖະກິດ ໂດຍຫັນເປັນຫຼາຍຮູບຫຼາຍແບບ ບັນດາຂະແໜງການພະລິດ ແລະ ປຸງແຕ່ງ; ຊຸກຍູ້ສົ່ງເສີມ ແລະ ເສີມຂະຫຍາຍກຳລັງແຮງ ຂອງບັນດາພາກສ່ວນເສດຖະກິດ, ປະຕິຮູບລັດວິສາຫະກິດໃຫ້ເຂັ້ມແຂງ, ເປັນກົນໄກ-ເຄື່ອງມືສຳຄັນ ໃຫ້ແກ່ການດຳເນີນການພະລິດ-ທຸລະກິດ ແລະ ສາມາດກາຍເປັນເຈົ້າພາທາງ ໃນລະບົບເສດຖະກິດແຫ່ງຊາດ.

- ທົບທວນຄືນ ແລະ ວາງແຜນນະໂຍບາຍ, ຍຸດທະສາດ ເພື່ອຂຸດຄົ້ນ, ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ມີປະສິດທິຜົນສູງສຸດ ແລະ ຍືນຍົງ, ເດັດດ່ຽວລຶບລ້າງບັນດາໂຄງການທີ່ບໍ່ມີປະສິດທິຜົນທາງເສດຖະກິດ ແລະ ເປັນພິນຮ້າຍຕໍ່ສະພາບແວດລ້ອມ. ແຕ່ລະຂະແໜງການຕ້ອງເປັນເຈົ້າການ ໃນການໃຊ້ເງິນກູ້ຢືມ ODA ຢ່າງມີປະສິດທິຜົນ.

⑤ ມອບໃຫ້ຄະນະພັກ ກະຊວງອຸດສາຫະກຳ-ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະປະຕິຮູບລັດວິສາຫະກິດ ແລະ ພາກສ່ວນກ່ຽວຂ້ອງ ຂອງສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການຈັດຕັ້ງປະຕິບັດມາດຕະການ ເພື່ອສ້າງຄວາມເຂັ້ມແຂງ, ຍົກສູງຄວາມສາມາດ ຂອງການພະລິດພາຍໃນ, ພັດທະນາຄວາມເຂັ້ມແຂງ ຂອງວິສາຫະກິດພາຍໃນ:

- ແກ້ໄຂບັນຫາຢ່າງເປັນລະບົບມາດຕະຖານ, ນະໂຍບາຍ ກ່ຽວກັບເສັ້ນທາງ, ການຄົມມະນາຄົມ ເພື່ອຮັບປະກັນໃຫ້ແກ່ການຈໍລະຈອນ, ຂົນສົ່ງສິນຄ້າ ໃນຂອບເຂດທົ່ວປະເທດ.

- ຄຸ້ມຄອງ ແລະ ສ້າງເງື່ອນໄຂໃຫ້ແກ່ການຫຼຸດຜ່ອນຕົ້ນທຶນ, ຍົກສູງສະມັດຕະພາບການພະລິດ ແລະ ສິນຄ້າໃຫ້ໄດ້ມາດຕະຖານ; ສ້າງຍີ່ຫໍ້ສິນຄ້າໃຫ້ຫຼາກຫຼາຍໂດຍເສີມຂະຫຍາຍທ່າແຮງຂອງຊາດ, ຂອງທ້ອງຖິ່ນ; ໂຄສະນາ, ສ້າງຄ່ານິຍົມ, ຊຸກຍູ້ ສົ່ງເສີມການຊົມໃຊ້ສິນຄ້າພາຍໃນ ໃຫ້ແຂງແຮງ.



สแกนด้วย CamScanner

- ຄຸ້ມຄອງລາຄາສິນຄ້າທີ່ກະທົບໄວ (ນ້ຳມັນເຊື້ອໄຟ, ສະບຽງອາຫານ) ໂດຍດຸ່ນດ່ຽງຈາກເຂດເຫຼືອໄປສູ່ເຂດທີ່ມີຄວາມຫຍຸ້ງຍາກ, ຂາດເຂີນ-ບໍ່ພຽງພໍ; ພ້ອມນັ້ນ ກໍ່ຮີບຮ້ອນສ້າງຍຸດທະສາດກວມລວມ ແລະ ກຳນົດມາດຕະການສະເພາະຕໍ່ສິນຄ້າຍຸດທະສາດ ເຊັ່ນ: ເຂົ້າກິນ, ນ້ຳມັນເຊື້ອໄຟ, ໄຟຟ້າ, ເງິນຕາ, ວັດຖຸມີຄ່າ... ເພື່ອຄ້ຳປະກັນຄວາມໝັ້ນຄົງ ຂອງຊາດ, ໃນປີ້ ຮີບຮ້ອນປະຕິຮູບລັດວິສາຫະກິດໄຟຟ້າລາວ ແລະ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ໃຫ້ສຳເລັດໄວ ເພື່ອກ້າວໄປສູ່ການປະຕິຮູບລັດວິສາຫະກິດອື່ນໆ ໄປຕາມໆກັນຢ່າງຕໍ່ເນື່ອງ.

- ດັດສົມ, ຄຸ້ມຄອງ ແລະ ມີຄວາມເຂັ້ມງວດ ຕໍ່ວິສາຫະກິດນຳເຂົ້າ-ສົ່ງອອກ, ອັດຊ່ອງຫວ່າງການຫຼົບຫຼີກພັນທະດ້ານພາສີ-ອາກອນ, ການຊຳລະສະສາງໃນລະບົບທະນາຄານ, ແກ້ໄຂຂາເຂົ້າຜະລິດຕະພັນທີ່ພາຍໃນສາມາດຜະລິດໄດ້, ວັດຖຸອັນຕະລາຍ ຕໍ່ຊີວິດ-ສຸຂະພາບ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມ.

- ສືບຕໍ່ປັບປຸງຄວາມເຂັ້ມແຂງ ດ້ານການພົວພັນເສດຖະກິດ-ການຄ້າກັບຕ່າງປະເທດ, ຫຼຸດຜ່ອນຈຳນວນບໍລິສັດ ເຮັດແຕ່ການນຳເຂົ້າ ຫັນມາລົງທຶນ ຫຼື ເກັບຊື້ຜະລິດຕະພັນພາຍໃນ ເພື່ອສົ່ງອອກໄປບັນດາປະເທດ ທີ່ມີສັນຍາ ແລະ ໃຫ້ສິດທິພິເສດດ້ານພາສີ ແກ່ ສປປ ລາວ.

- ຄົ້ນຄວ້າ, ກຳນົດອອກນະໂຍບາຍພິເສດ ຕໍ່ພືດ-ສັດ ແລະ ການສົ່ງເສີມ ການຜະລິດຕໍ່ສິນຄ້າດັ່ງກ່າວ ຢູ່ເຂດເສດຖະກິດ, ເຂດຊົນນະບົດ-ຫ່າງໄກສອກຫຼີກ ເພື່ອດຶງດູດການລົງທຶນ ແລະ ສ້າງໃຫ້ມີສິນຄ້າປາຍແຫຼມ.

- ເພີ່ມທະວີການສະໜອງ-ຊ່ວຍເຫຼືອ ດ້ານເຕັກນິກ-ວິຊາການ ໃຫ້ປະຊາຊົນ ແລະ ຜູ້ປະກອບການ ເພື່ອຍົກສະມັດຕະພາບ ແລະ ຄຸນນະພາບຜົນຜະລິດ ກະສິກຳ-ປ່າໄມ້ ຕອບສະໜອງຄວາມຕ້ອງການ ຂອງຕະຫຼາດ ແລະ ສາມາດແຂ່ງຂັນໄດ້.

- ກຳນົດຄືນໃໝ່ ນະໂຍບາຍຊຸກຍູ້ສົ່ງເສີມ ດ້ານກະສິກຳ, ແກ້ໄຂຊ່ອງຫວ່າງ, ການສວຍໂອກາດ, ການກົດໜີບ ກ່ຽວກັບການສະໜອງ ນ້ຳ, ໄຟຟ້າ ກໍ່ຄື ປັດໃຈການຜະລິດອື່ນໆ... ຮັບໃຊ້ການຜະລິດກະສິກຳ ຢ່າງສົມເຫດສົມຜົນ.

໖ ມອບໃຫ້ອົງຄະນະພັກ ກະຊວງການຕ່າງປະເທດ, ກະຊວງແຜນການ ແລະ ການລົງທຶນກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ດຳເນີນການສົ່ງເສີມ ແລະ ເພີ່ມທະວີການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ:

- ຊຸກຍູ້ ແລະ ເລັ່ງລັດການລົງທຶນກໍ່ສ້າງເສັ້ນທາງດ່ວນ: ວັງວຽງ-ບໍ່ເຕັນ, ວຽງຈັນ-ຮ່າໂນ້ຍ, ວຽງຈັນ-ປາກເຊ, ປາກເຊ-ດ່ານໜອງນົກຂຽນ (ຊາຍແດນລາວ-ກຳປູເຈຍ) ແລະ ປາກເຊ-ດ່ານພູເກືອ (ຊາຍແດນລາວ-ຫວຽດນາມ); ແກ້ໄຂຂໍ້ຄົງຄ້າງດ້ານກົນໄກ ແລະ ນະໂຍບາຍຊຸກຍູ້ ການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ຮ່ວມມືຂຸດຄົ້ນນຳໃຊ້ທ່າເຮືອຫວຸ້ງອາງ ຢ່າງມີປະສິດທິຜົນ; ໂຄງການຮ່ວມມືຂຸດຄົ້ນຖ່ານຫີນ ເພື່ອນຳໃຊ້ພາຍໃນ ແລະ ສົ່ງອອກ, ໂຄງການຮ່ວມມືກໍ່ສ້າງໂຮງງານໄຟຟ້າຖ່ານຫີນ ເພື່ອຂາຍໄຟຟ້າໃຫ້ກຳປູເຈຍ, ຫວຽດນາມ ນັບທັງສົມທົບປະເທດກ່ຽວຂ້ອງ ຄົ້ນຄວ້າສ້າງສາຍສົ່ງ ເພື່ອສົ່ງໄຟຟ້າຂາຍໃຫ້ມາເລເຊຍ ແລະ ສິງກະໂປ.

- ສ້າງສະພາບແວດລ້ອມການລົງທຶນ, ການດຳເນີນທຸລະກິດ ຢ່າງສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ, ສົ່ງເສີມການແຂ່ງຂັນ, ການລົງທຶນ FDI ດ້ວຍມາດຕະການບຸລິມະສິດທີ່ແຂງ



สแกนด้วย CamScanner

ແຮງ. ສືບຕໍ່ດຶງດູດເອົາການລົງທຶນ ຢ່າງມີຈຸດສຸມ ເພື່ອສ້າງໃຫ້ເກີດມີຖານການຜະລິດ, ການປຸງແຕ່ງ ໂດຍສະເພາະ ແມ່ນໂຄງການຜະລິດເພື່ອການສົ່ງອອກ ໃນຂະແໜງການທີ່ມີທ່າແຮງ.

⑦ ມອບໃຫ້ຄະນະພັກ ກະຊວງ ສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ ດຳເນີນມາດຕະການແກ້ໄຂບັນຫາ ແລະ ຍົກລະດັບ ການພັດທະນາຊັບພະຍາກອນມະນຸດ ແລະ ແກ້ໄຂບັນຫາຫຍໍ້ທໍ້ດ້ານວັດທະນະທຳ-ສັງຄົມ ເປັນຕົ້ນ ການປະລະການຮຽນ-ການສອນ, ບັນຫາຂາດແຄນແຮງງານ ແລະ ຍົກລະດັບສີມືແຮງງານ, ການຄ້າມະນຸດ, ໄພສັງຄົມອື່ນໆ.

4). ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ອົງການຈັດຕັ້ງມະຫາຊົນ, ຄະນະໂຄສະນາອົບຮົມສູນກາງພັກ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ເພີ່ມທະວີການໂຄສະນາ, ສຶກສາອົບຮົມ, ການນຳເຂົ້າໃນຫຼັກສູດການຮຽນ-ການສອນ, ປຸກລະດົມ ຂະບວນການ ປຸກຈິດສຳນຶກ ກ່ຽວກັບການສ້າງຄວາມຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ ແນວທາງສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ສູ່ລວງເລິກ. ພ້ອມກັນນັ້ນ ກໍ່ໂຄສະນາຜະລິດຕະພັນພາຍໃນຊາດ ໃນທຸກພາຫະນະສື່ມວນຊົນ ໃຫ້ແຂງແຮງ ແລະ ກວ້າງຂວາງ.

5). ມອບໃຫ້ຄະນະພັກ ສະພາແຫ່ງຊາດ ຕິດຕາມ, ກວດກາ ແລະ ຊຸກຍູ້ ລັດຖະບານ ໃນການພັນຂະຫຍາຍ ມະຕິສະບັບນີ້ ໃຫ້ເປັນນິຕິກຳອັນລະອຽດ ເພື່ອຈັດຕັ້ງປະຕິບັດ ໃຫ້ເຂົ້າສູ່ຕົວຈິງຢ່າງມີປະສິດທິພົນສູງ.

6). ມອບໃຫ້ຫ້ອງວ່າການສູນກາງພັກ ສົມທົບກັບບັນດາອົງການເສນາທິການ ໃຫ້ແກ່ສູນກາງພັກ ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ເພື່ອລາຍງານ ຕໍ່ກົມການເມືອງສູນກາງພັກ ໃຫ້ທັດຊີ້ນຳ ເປັນປົກກະຕິ ໃນແຕ່ລະໄລຍະ.

ຕ. ກົມການເມືອງສູນກາງພັກ
ເລຂາທິການໃຫຍ່ ຄະນະບໍລິຫານສູນກາງພັກ

ທອງລຸນ ສີສຸລິດ



สแกนด้วย CamScanner